ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ກອງສະໜາມບິນລາວ

ເລກທີ 5878/ກສລ

ນະຄອນຫຼວງວຽງຈັນ, ວັນທີ 02 ຕຸລາ 2025

# ໜັງສືແຈ້ງເຊີນປະມູນ

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງໂຍທາທິການ ແລະຂົນສົ່ງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກອງສະໜາມບິນລາວ ສະບັບເລກທີ 11792/ຍທຂ, ລົງວັນທີ 25 ພຶດສະພາ 2022;
- ອີງຕາມ ຕາມຂໍ້ຕົກລົງ ຂອງລັດຖະມົນຕີກະຊວງໂຍທາທິການ ແລະຂົນສົ່ງ ສະບັບເລກທີ 23152/ຍທຂ, ລົງວັນທີ 25 ກັນຍາ 2025.

1. ກອງສະໜາມບິນລາວ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຍື່ນຊອງປະມູນສໍາລັບ ການສະໜອງເຄື່ອງໃຊ້ຫ້ອງການ (ປະເພດ ຄອມພິວເຕີ, ປິ້ນເຕີ, ໂປລເຈັກເຕີ ແລະ ເຄື່ອງສະແກນ) ຂອງກອງ ສະໜາມບິນລາວ ປະຈໍາປີ 2025, ໄລຍະການສົ່ງມອບແມ່ນບໍ່ເກີນ 30 ວັນ.
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນ ກົດໝາຍວ່າດ້ວຍ ການຈັດຊື້ ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຈັດຊື້ຈັດຈ້າງດ້ວຍທຶນ ຂອງລັດ ສະບັບເລກທີ 477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ ອະນຸຍາດໃຫ້ບັນດາ ບໍລິສັດ ຫຼື ຫ້າງຮ້ານ ທີ່ມີຄຸນນະວຸດທິເໝາະສົມ, ມີໃບອະນຸຍາດດໍາເນີນ ທຸລະກິດທີ່ຖືກຕ້ອງຕາມກົດໝາຍ ຊຶ່ງອອກໂດຍພາກສ່ວນທີ່ມີສິດກ່ຽວຂ້ອງ ຊຶ່ງກ່ຽວຂ້ອງກັບວຽກງານນີ້ (ລາຍລະອຽດ ແມ່ນໄດ້ລະບຸໃນເອກະສານປະມູນ ໝວດທີ II, ຂໍ້ ຄ).
4. ບໍລິສັດ ຫຼື ຫ້າງຮ້ານ ທີ່ມີຄຸນນະວຸທິເໝາະສົມ ຊຶ່ງສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ກອງສະໜາມບິນລາວ, ຜູ້ຮັບຜິດຊອບ: ທ່ານ ສອນມະນີ ໄພສະຫວັດ ໂທລະສັບ: 020 22219363 ແລະ ທ່ານ ແທວນຄໍາ ພິມມະ ສອນ ໂທລະສັບ: 020 99375788 ຕາມວັນ ແລະ ເວລາ ລັດຖະການ.
5. ບໍລິສັດ ຫຼື ຫ້າງຮ້ານໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນໜັງສືສະເໜີຫາ ກອງສະ ໜາມບິນລາວ, ເລີ່ມແຕ່ວັນທີ 06 ຕຸລາ ຫາ 10 ພະຈິກ 2025 ເປັນຕົ້ນໄປ, ໃນລາຄາ 3.000.000 ກີບ/ຊຸດ (ສາມລ້ານກີບ), ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ.
6. ຊອງປະມູນ ຕ້ອງສົ່ງທີ່ຫ້ອງປະຊຸມເບີ 01 ກອງສະໜາມບິນລາວ, ກ່ອນເວລາ 09:00 ໂມງ ຂອງວັນທີ**10** ພະຈິກ 2025. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ ແມ່ນຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການ ເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 09:10 ນາທີ, ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈເຂົ້າຮ່ວມນໍາ.
7. ທຸກໆຊອງປະມູນ ຕ້ອງໄດ້ມີໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫຼື ໜັງສືຄໍ້າປະກັນການປະມູນຈາກ ທະນາຄານ ຫລື ເປັນເງິນສົດ ຫລື ແຊັກເງິນສົດ (ວີຊ້າ) ຢ່າງໜ້ອຍບໍ່ໃຫ້ຫລຸດ 2% ຂອງລາຄາສະທີ່ເໜີເຂົ້າ ປະມູນ.

ເຊັນແທນ ຫົວໜ້າກອງ

ຮອງຫົວໜ້າກອງ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກອງສະໜາມບິນລາວ

ອະນຸສັກ ກິດຕິລາດ